*Souphanouvong University Journal of Multidisciplinary Research and Development*
2024, Vol.9. No. 1, 100-107
https://doi.org/10.69692/SUJMRD0901100

# Study on Factors Affecting Performance in the Construction Business of Contractors in the Pakse Municipality, Champasack Province, Lao PDR Case study: Building construction business

**Soukthavy KHANTRY[1*], Bounthavay KHEOPANYA[1], Souvanh SANGVIBOUTH[1], Sengaloun KEOALOUNXAY[1], and Sinthavone DARAVONG[1]**
*Faculty of Architecture, National University of Laos, Lao PDR*

***[1*]Correspondence:***
*Soukthavy KHANTRY, Faculty of Architecture, National University of Laos, Tel: +856 20 55694106, E-mail: S.khantry@nuol.edu.la*
*[1]Faculty of Architecture, National University of Laos*

***Article Info:***
*Submitted: Jan 08, 2023*
*Revised: Feb 05, 2023*
*Accepted: Feb 20, 2023*

**Abstract**

The purpose of this research is to examine the key factors that affect the construction business of the construction companies in the Pakse Municipality, Champasack Province of the Lao People's Democratic Republic, which include the business model and operations of the construction company, as well as the analyze of various factors that affect the success of the business. Additionally, the research investigates the causes and methods for preventing or resolving such issues, considering the project's two critical aspects. The data were obtained from 53 construction company utilizing questionnaires. The data was further statistically examined to determine the factors' relative relevance and test the hypothesis.

Research results showed 12 major problems: 1) project owner does not pay the agreed-upon construction costs; 2) lack of pre-employment financial assessment; 3) lack of personnel planning; 4) lack of motivation to work; 5) inflation and country's economic insolvency; 6) registered capital and performance of the company; 7) overproduction and overpricing; 8) lack of mechanical planning; 9) lack of planning and control of material use; 10) competitors who are companies from other provinces or abroad; 11) shortage of subcontractors and skilled labor; 12) encouragement-promotion and knowledge of modern construction techniques from the government. Altogether, the two fundamental factors indicated that the most significant issue is within the project, specifically the finances and building budget, with an average mean score of 4.18, which is 100%. As for personnel and staff, the average mean score of 4.14 covers 100%. In terms of sourcing, the average mean score of 3.85, accounting for 83.33%; for tools and construction machinery, the average mean score of 3.78, representing 83.33%. Considering building materials, the average mean score of 3.74, forming 71.42%, and in terms of environment and regulations, the average mean score of 3.74, equivalent to 60 percent of the problems with an average mean score greater than 3.5.

The hypothesis testing showed that the $\rho$ value is less than the $\alpha$ value. In summary, factors that affect the operation of construction contractor businesses do not depend on whether the contractor is profitable or at a loss/equity, or the importance of the factors does not depend on performance.

**Keywords:** *construction business, construction businesses issue, construction management*

## 1. ພາກສະເໜີ

ພາກໃຕ້ຂອງລາວແມ່ນເຂດເສດຖະກິດຈຸດສຸມສຳຄັນເຂດໜຶ່ງທີ່ລັດຖະບານໄດ້ວາງແນວທາງນະໂຍບາຍໃນການລົງທຶນຢ່າງມີລະບຽບແບບແຜນ ໂດຍສະເພາະການລົງທຶນໃນຂະແໜງອຸດສະຫະກຳການກໍ່ສ້າງ ເຊັ່ນ: ການສ້າງເຂດເສດຖະກິດພິເສດຈຳປາສັກ ໂດຍການແບ່ງເຂດດັ່ງກ່າວເປັນສອງຈຸດ ຄື ເຂດອຸດສະຫະກຳປາກເຊ-ຍີ່ປຸ່ນ SME (11A) ແລະ ເຂດນິຄົມອຸດສະຫະກຳຈຳປາສັກ ລາວ-ບໍລິການ (11B) ເພື່ອຮັກສາສະຖຽນລະພາບການຂະຫຍາຍຕົວທາງເສດຖະກິດ ແລະ ສົ່ງເສີມອັດຕາການຂະຫຍາຍຕົວຂອງຜະລິດຕະພັນພາຍໃນ (GDP) ສະເລ່ຍເພີ່ມຂຶ້ນ 12.65 ສ່ວນຮ້ອຍຕໍ່ປີ ລາຍໄດ້ສະເລ່ຍຕໍ່ຫົວຄົນ 1,630 ໂດລາສະຫາະລັດ ຊຶ່ງສາມາດບັນລຸຕາມເປົ້າໝາຍຂອງແຜນການ 5 ປີ ຄັ້ງທີ IX (2021-2025) ແລະ ຍັງສືບເນື່ອງພັດທະນາຕາມແຜນແມ່ບົດການເຊື່ອມໂຍງເຂດ 3 ຫຼ່ຽມເສດຖະກິດສາກົນ ບັນດາ 4 ແຂວງ ພາກໃຕ້ໄດ້ຮັບການພັດທະນາຢ່າງຕໍ່ເນື່ອງ ພິເສດແມ່ນທາງດ້ານການກໍ່ສ້າງເພື່ອຕອບສະໜອງໃຫ້ແກ່ການບໍລິການ ດ້ວຍເຫດຜົນທັງຫຼາຍເຫຼົ່ານີ້ ຈຶ່ງມີບໍລິສັດຮັບເໝົາກໍ່ສ້າງເກີດຂຶ້ນເປັນຈຳນວນຫຼວງຫຼາຍທັງບໍລິສັດກໍ່ສ້າງພາຍໃນປະເທດ ແລະ ບໍລິສັດກໍ່ສ້າງທີ່ມາຈາກຕ່າງປະເທດ (Ministry of Planning of Investment, 2021).

ທຸລະກິດຮັບເໝົາກໍ່ສ້າງ ໃນຊຸມປີຜ່ານມາ ຢູ່ນະຄອນປາກເຊ ຂະຫຍາຍຕົວຢ່າງໄວວາແລະຕໍ່ເນື່ອງ ໂດຍມີການກໍ່ສ້າງອາຄານເປັນຈຳນວນຫຼາຍ ແລະ ມີຂະໜາດໃຫຍ່ຂຶ້ນທັງເປັນອາຄານສູງ, ງົບປະມານມູນຄ່າການກໍ່ສ້າງກໍ່ສູງຂຶ້ນຕາມ ຊຶ່ງສົ່ງຜົນໂດຍກົງຕໍ່ຂະບວນການບໍລິຫານວຽກກໍ່ສ້າງ ນັບຕັ້ງແຕ່ການປະມູນໂຄງການ ໃນສ່ວນຂອງການປະມູນໂຄງການ ກໍ່ມີການແຂ່ງຂັນສູງ ເຮັດໃຫ້ຜູ້ຮັບເໝົາໄດ້ຮັບໂຄງການໃນລາຄາທີ່ຕ່ຳ ມີຄວາມສ່ຽງທີ່ຈະຂາດທຶນສູງ, ບາງບໍລິສັດທີ່ຮັບໂຄງການໄປແລ້ວ ກໍ່ພົບບັນຫາເນື່ອງຈາກສະພາບເສດຖະກິດມີການປ່ຽນແປງ ເຮັດໃຫ້ລາຄາວັດສະດຸກໍ່ສ້າງປ່ຽນແປງໄປຕາມ, ຄ່າແຮງແຮງກໍ່ແພງຂຶ້ນ ເຮັດໃຫ້ພົບຄວາມຫຍຸ້ງຍາກໃນການຄວບຄຸມຄ່າໃຊ້ຈ່າຍ ໃນບາງບໍລິສັດກໍ່ເກີດມີໜີ້ສິນ ຄຸມເຄືອ, ສົ່ງຜົນໃຫ້ການດຳເນີນໂຄງການກໍ່ສ້າງບໍ່ເປັນໄປຕາມແຜນ ຊັກຊ້າ ບໍ່ທັນຕາມກຳນົດເວລາສົ່ງມອບໂຄງການ ບາງບໍລິສັດກໍ່ບໍ່ສາມາດດຳເນີນການກໍ່ສ້າງຕໍ່ໄດ້ຈົນປະຖິ້ມໂຄງການກໍ່ມີ. ໄລຍະຜ່ານມາ ບໍລິສັດກໍ່ສ້າງໃນລາວພຽງແຕ່ເປັນວິສະຫະກິດຂະໜາດນ້ອຍແລະຂະໜາດກາງເທົ່ານັ້ນ ຖ້າຮັບຫຼາຍໂຄງການພ້ອມກັນອາດເຮັດໃຫ້ຂາດແຄນເງິນທຶນໝູນວຽນ, ໂດຍສະເພາະຮັບໂຄງການກໍ່ສ້າງອາຄານຂອງລັດ ຫຼາຍໆໂຄງການທີ່ລັດບໍ່ສາມາດຕອບສະໜອງການຊຳລະສະສາງໄດ້ຕາມງວດທີ່ລະບຸໃນສັນຍາ ເນື່ອງຈາກວ່າເປັນເງິນງົບປະມານ ການຊຳລະສະສາງຕ້ອງໄດ້ອີງໃສ່ການເກັບລາຍຮັບເຂົ້າຄັງງົບປະມານຂອງລັດ ຊຶ່ງເຮັດໃຫ້ການຊຳລະສະສາງຊັກຊ້າ ຍິ່ງເພີ່ມທະວີບັນຫາຫຍຸ້ງຍາກໃຫ້ແກ່ຜູ້ຮັບເໝົາ ບາງບໍລິສັດກໍ່ປະສົບບັນຫາຈາກວັດສະດຸກໍ່ສ້າງຂາດແຄນ ແລະ ລາຄາວັດສະດຸກໍ່ສ້າງກໍ່ປ່ຽນແປງຫຼາຍ ປະກອບກັບການຂາດແຄນເຄື່ອງມື, ເຄື່ອງກົນຈັກ ແລະ ອີກບັນຫາໜຶ່ງທີ່ສຳຄັນທີ່ສຸດກໍ່ຄື: ບັນດາຄູ່ແຂ່ງຈາກນັກລົງທຶນຕ່າງຊາດ ຫຼື ລະຫວ່າງບໍລິສັດກໍ່ສ້າງພາຍໃນປະເທດ ແລະ ບໍລິສັດກໍ່ສ້າງຂອງຕ່າງປະເທດ ໃນປັດຈຸບັນມີການແຂ່ງຂັນສູງ ບໍລິສັດຕ່າງປະເທດຈະມີຂໍ້ໄດ້ປຽບເນື່ອງຈາກ ການເຂົ້າເຖິງແຫຼ່ງທຶນງ່າຍ, ມີເງິນທຶນໝູນວຽນສູງ ແລະຍັງໄດ້ຮັບສິດທິພິເສດ ຫຼື ບູລິມະສິດໃນການຍົກເວັ້ນພາສີນຳເຂົ້າວັດສະດຸ ອຸປະກອນ ເຄື່ອງກົນຈັກແຮງງານ, ຊ່າງເຕັກນິກ. ສະນັ້ນ, ເວລາເຂົ້າຮ່ວມປະມູນໂຄງການ ຈຶ່ງເຮັດໃຫ້ບໍລິສັດທີ່ມາຈາກຕ່າງປະເທດເປັນຜູ້ຊະນະການປະມູນ ຫຼື ໄດ້ຮັບໂຄງການ ນີ້ກໍ່ແມ່ນເຫດຜົນໜຶ່ງທີ່ພາໃຫ້ຜູ້ຮັບເໝົາ ຫຼື ບໍລິສັດກໍ່ສ້າງພາຍໃນປະເທດພົບຄວາມຫຍຸ້ງຍາກໃນການບໍລິຫານຕົ້ນທຶນການກໍ່ສ້າງ ລວມໄປເຖິງການຄວບຄຸມຄຸນນະພາບຂອງໂຄງການ ພາໃຫ້ການດຳເນີນໂຄງການຫຼ້າຊ້າບໍ່ເປັນໄປຕາມແຜນ ບາງຄັ້ງອາດເຮັດໃຫ້ຄ່າໃຊ້ຈ່າຍເພີ່ມຂຶ້ນອີກ, ສິ່ງຕ່າງໆເຫຼົ່ານີ້, ເຮັດໃຫ້ບໍລິສັດຮັບເໝົາກໍ່ສ້າງຂາດທຶນ, ບາງບໍລິສັດກໍ່ເກີດມີໜີ້ສິນຄຸມເຄືອແກ່ຍາວຈົນບໍ່ສາມາດບໍລິຫານໂຄງການ ຫຼື ບໍລິຫານບໍລິສັດຂອງຕົນຕໍ່ໄປໄດ້ (The National Assembly of Lao PDR, 2011).

ຈຸດປະສົງຂອງການວິໄຈນີ້ ເປັນການສຶກສາເພື່ອຊອກຫາ ປັດໄຈສຳຄັນທີ່ສົ່ງຜົນຕໍ່ການດຳເນີນທຸລະກິດຮັບ ເໝົາກໍ່ສ້າງຂອງບໍລິສັດກໍ່ສ້າງໃນນະຄອນປາກເຊ ແຂວງຈຳປາສັກ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ຊຶ່ງໄດ້ສຶກສາເຖິງຮູບແບບ ແລະ ລັກສະນະໃນການດຳເນີນທຸລະກິດຂອງບໍລິສັດກໍ່ສ້າງລວມທັງ ວິເຄາະເຖິງປັດໄຈດ້ານຕ່າງໆ ທີ່ສົ່ງຜົນຕໍ່ຄວາມສຳເລັດໃນການດຳເນີນທຸລະກິດດັ່ງນັ້ນເຫັນວ່າບົດວິໄຈນີ້ ຈຶ່ງມີຄວາມຈຳເປັນຢ່າງຍິ່ງຕ້ອງໄດ້ສຶກສາເຖິງຮູບແບບ ແລະ ລັກສະນະໃນການດຳເນີນທຸລະກິດຮັບເໝົາກໍ່ສ້າງ ລວມທັງການສຶກສາເຖິງປັດໄຈດ້ານຕ່າງໆ ທີ່ສົ່ງຜົນກະທົບຕໍ່ຄວາມສຳເລັດໃນການດຳເນີນທຸລະກິດຮັບເໝົາກໍ່

ສ້າງໃນລາວ ເພື່ອເປັນການປັບປຸງ ແລະ ພັດທະນາອຸດສະຫະກຳການກໍ່ສ້າງໃຫ້ເທົ່າທຽມກັບພາກພື້ນ ແລະ ສາກົນ.

## 2. ອຸປະກອນ ແລະ ວິທີການ

ເຄື່ອງມືທີ່ໃຊ້ໃນການວິໄຈແມ່ນໃຊ້ແບບຟອມສຳພາດ ແລະແບບຟອມຖາມ, ວິທີການວິໄຈແບ່ງເປັນ 2 ຂັ້ນຕອນ, ກ) ໃຊ້ວິທີສຳພາດປະທານບໍລິສັດກໍ່ສ້າງຫຼືຜູ້ບໍລິຫານໂຄງການຂອງບໍລິສັດກໍ່ສ້າງທີ່ມີໃບອະນຸຍາດດຳເນີນທຸລະກິດຊັ້ນ 1 ຈຳນວນ 30 ບໍລິສັດ ຊຶ່ງໄດ້ສຶກສາເຖິງຮູບແບບ ແລະ ລັກສະນະການດຳເນີນທຸລະກິດຮັບເໝົາກໍ່ສ້າງໃນຊ່ວງຫ້າປີຜ່ານມາ,ໄດ້ສຶກສາເຖິງບັນຫາສຳຄັນທີ່ສົ່ງຜົນຕໍ່ການດຳເນີນທຸລະກິດຮັບເໝົາກໍ່ສ້າງ ໂດຍການວິເຄາະຈາກ ສອງປັດໄຈພື້ນຖານຄື ປັດໄຈພາຍໃນ ແລະ ພາຍນອກຂອງໂຄງການ ຊຶ່ງສັງລວມໄດ້ 6 ປັດໄຈຫຼັກ ປະກອບມີ 1) ປັດໄຈດ້ານບຸກຄະລາກອນ ແລະ ຜູ້ປະຕິບັດງານ 2) ປັດໄຈດ້ານການເງິນ ແລະ ງົບປະມານການກໍ່ສ້າງ, 3) ປັດໄຈດ້ານເຄື່ອງມື ແລະ ເຄື່ອງກົນຈັກ, 4) ປັດໄຈດ້ານວັດສະດຸອຸປະກອນກໍ່ສ້າງ, 5) ປັດໄຈດ້ານການຈັດຫາແຫຼ່ງວຽກ ແລະ 6) ປັດໄຈດ້ານສະພາບແວດລ້ອມ ແລະຂໍ້ບັງຄັບ ຊຶ່ງສາມາດແຍກໄດ້ 37 ບັນຫາສຳຄັນທີ່ສົ່ງຜົນກະທົບຕໍ່ການດຳເນີນທຸລະກິດຮັບເໝົາກໍ່ສ້າງອາຄານໃນເຂດສີ່ແຂວງພາກໃຕ້ຂອງ ສປປ ລາວ. ຂ) ນຳຂໍ້ມູນດັ່ງກ່າວມາສ້າງຟອມແບບສອບຖາມຄວາມຄິດເຫັນຈາກບໍລິສັດກໍ່ສ້າງທັງໝົດ 55 ບໍລິສັດທີ່ເປັນກຸ່ມຕົວຢ່າງໃນການສຶກສາ ຫຼັງຈາກນັ້ນ ນຳຂໍ້ມູນມາວິເຄາະໂດຍໃຊ້ວິທີທາງສະຖິຕິ ເພື່ອຊອກຫາບັນ ຫາສຳຄັນ ແລະ ພິສູດສົມມຸດຖານ ທັງນຳເອົາບັນຫາມາພິຈາລະນາສຶກສາຫາສາເຫດ ແລະ ແນວທາງໃນການປ້ອງກັນ ຫຼື ແກ້ໄຂໂດຍການສຳພາດຜູ້ທີ່ມີປະສົບການໃນບໍລິຫານທຸລະກິດກໍ່ສ້າງ.

ການວິເຄາະພິສູດສົມມຸດຖານໃນການວິໄຈແມ່ນດຳເນີນໂດຍການໃຊ້ໂປຣແກຣມ SPSS. 20 ສຳລັບ IBM ໂດຍວິທີ ANOVA ທີ່ຄວາມໜ້າຈະເປັນທີ່ $*p\leq 0.1$, $**p\leq 0.05$ ແລະ $***p\leq 0.01$ ຕາມກຸ່ມ: 1) ກຸ່ມບໍລິສັດກໍ່ສ້າງທີ່ມີກຳໄລ, 2) ບໍລິສັດກໍ່ສ້າງທີ່ຂາດທຶນ ຫຼື ເທົ່າທຶນ. ໂດຍໃນການວິເຄາະຈະສົມມຸດຖານທີ່ວ່າ ບໍລິສັດກໍ່ສ້າງທີ່ມີກຳໄລ ແລະ ບໍລິສັດກໍ່ສ້າງທີ່ຂາດທຶນ ຈະໄດ້ຮັບຜົນກະທົບຈາກບັນຫາທີ່ມີຄວາມຮຸນແຮງແຕກຕ່າງກັນ $H_0 : \rho = 0$ ບໍລິສັດກໍ່ສ້າງທີ່ມີກຳໄລ ແລະ ບໍລິສັດກໍ່ສ້າງທີ່ຂາດທຶນ ຈະໄດ້ຮັບຜົນກະທົບຈາກບັນຫາທີ່ມີຄວາມຮຸນແຮງແຕກຕ່າງກັນ, $H_1 : \rho \neq 0$ ບໍລິສັດກໍ່ສ້າງທີ່ມີກຳໄລ ແລະ ບໍລິສັດກໍ່ສ້າງທີ່ຂາດທຶນ ຈະບໍ່ໄດ້ຮັບຜົນກະທົບຈາກບັນຫາທີ່ມີຄວາມຮຸນແຮງແຕກຕ່າງກັນ

ຈາກການວິເຄາະເຫັນວ່າ ຄ່າ $\rho$ (ຄວາມໜ້າຈະເປັນ) ທຸກໆປັດໄຈແມ່ນມີຄ່ານ້ອຍກວ່າ ຄ່າ $\alpha$ (ລະດັບຄວາມສຳຄັນ) ເທົ່າ 0.05 ບັນຫາທີ່ສົ່ງຜົນຕໍ່ການດຳເນີນທຸລະກິດຮັບເໝົາກໍ່ສ້າງ ບໍ່ຂຶ້ນຢູ່ກັບວ່າຈະເປັນຜູ້ຮັບເໝົາກໍ່ສ້າງທີ່ມີຜົນກຳໄລ ຫຼື ຜູ້ຮັບເໝົາກໍ່ສ້າງທີ່ຂາດທຶນ/ເທົ່າທຶນ ການໃຫ້ຄວາມສຳຄັນຂອງປັດໄຈຕ່າງໆ ບໍ່ໄດ້ຂຶ້ນຢູ່ກັບຜົນປະກອບການ.

## 3. ຜົນໄດ້ຮັບ

ຜົນສຳຫຼວດຂໍ້ມູນຈາກແບບສອບຖາມເກັບມາໄດ້ 53 ຊຸດ, ຜົນວິເຄາະຂໍ້ມູນທີ່ໄດ້ຈາກແບບສອບຖາມ:

### 3.1 ຮູບແບບ ແລະ ລັກສະນະການດຳເນີນທຸລະກິດຮັບເໝົາກໍ່ສ້າງ

ບໍລິສັດກໍ່ສ້າງໃນເຂດສີ່ແຂວງພາກໃຕ້ຂອງ ສປປ ລາວ 90.57 ສ່ວນຮ້ອຍ ແມ່ນເປັນເຈົ້າຂອງຜູ້ດຽວ ແລະ 9.43 ສ່ວນຮ້ອຍ ແມ່ນເປັນຮຸ້ນສ່ວນຮ່ວມທຶນຊຶ່ງເປັນກຳລະມິໝູ່ເພື່ອນກັນ, ອ້າຍເອື້ອຍນ້ອງຄິງ ທີ່ລົງທຶນຮ່ວມກັນເພື່ອບໍລິຫານທຸລະກິດຮ່ວມກັນກັນ.

ສຳລັບແຫຼ່ງທຶນທີ່ບໍລິສັດນຳມາລົງທຶນໃນທຸລະກິດຮັບເໝົາກໍ່ສ້າງ ສ່ວນຫຼາຍຈະເປັນເງິນທຶນສ່ວນບຸກຄົນກວມເອົາ 50.95 ສ່ວນຮ້ອຍ, ເງິນທີ່ໄດ້ຈາກການກູ້ຢືມ 39.62%, ເງິນທີ່ໄດ້ຈາກການຮ່ວມທຶນກັນແມ່ນ 9.43%.

ສຳລັບການຕິດຕໍ່ ຫຼື ປະມູນຮັບງານຂອງບໍລິສັດກໍ່ສ້າງໃນໄລຍະຜ່ານມາແມ່ນຕິດຕໍ່ປະມູນຮັບວຽກໂດຍກົງຈາກເຈົ້າຂອງໂຄງການກວມເອົາ 77.36%, ແລະ ທັງຕິດຕໍ່ປະມູນເອງ ແລະ ແບບຮັບເໝົາຊ່ວງຈາກບໍລິສັດອື່ນແມ່ນ 22.64%.

ສຳລັບການດຳເນີນທຸລະກິດຮັບເໝົາກໍ່ສ້າງໃນໄລຍະຫ້າປີຜ່ານມາ ພົບວ່າ ບໍລິສັດທີ່ບອກທີ່ມີຜົນກຳໄລຄິດເປັນ 50.95%, ບໍລິສັດທີ່ບອກວ່າການດຳເນີນທຸລະກິດຜ່ານມາເທົ່າທຶນຄິດເປັນ 20.75% ແລະ ບໍລິສັດບອກວ່າການດຳເນີນງານໄລຍະຫ້າປີຜ່ານມາຂາດທຶນ ຊຶ່ງຄິດເປັນ 28.30%.

ສຳລັບການດຳເນີນທຸລະກິດຮັບເໝົາກໍ່ສ້າງໃນໄລຍະຫ້າປີຜ່ານມາ ພົບວ່າ ບໍລິສັດກໍ່ສ້າງໄດ້ຮັບໂຄງການຈຳນວນ 2-4 ໂຄງການຕໍ່ປີ ແລະ ມີມູນຄ່າແຕ່ 10,000,000,000 (ສິບພັນລ້ານກີບ) ເຖິງ 20,000,000,000 (ຊາວພັນລ້ານກີບ) ສ່ວນຫຼາຍແລ້ວແມ່ນເປັນໂຄງການທີ່ມາຈາກພາກສ່ວນຂອງລັດຖະບານ

### 3.2 ປັດໄຈທີ່ສຳຄັນທີ່ສົ່ງຜົນກະທົບຕໍ່ການດຳເນີນທຸລະກິດຮັບເໝົາກໍ່ສ້າງອາຄານ

ຜ່ານການວິເຄາະຂໍ້ມູນ, ຜູ້ຕອບແບບສອບຖາມໃຫ້ຄວາມສຳຄັນກັບກ່ຽວກັບ ເຈົ້າຂອງໂຄງການບໍ່ຊຳລະຄ່າກໍ່ສ້າງຕາມທີ່ໄດ້ຕົກລົງກັນໃນສັນຍາ ມີຄ່າສະເລ່ຍ 4.75 ຮອງລົງມາໄດ້ແກ່ ຂາດການປະເມີນສັກກາຍຍະພາບທາງດ້ານການເງິນກ່ອນຮັບງານ ມີຄ່າສະເລ່ຍ 4.57, ຖັດມາແມ່ນຂາດການວາງແຜນການໃຊ້ບຸກຄະລາກອນມີຄ່າສະເລ່ຍ 4.37, ການຂາດແຮງຈູງໃຈໃນການເຮັດວຽກມີຄ່າສະເລ່ຍ 4.28 ແລະ ໜ້ອຍທີ່ສຸດແມ່ນ ການຊຸກຍູ້-ສົ່ງເສີມ ແລະ ໃຫ້ຄວາມຮູ້ດ້ານເຕັກນິກການກໍ່ສ້າງທີ່ທັນສະໄໝຈາກພາກສ່ວນລັດ ມີຄ່າສະເລ່ຍ 4.02 ຊຶ່ງກຳນົດເອົາບັນຫາສຳຄັນ 12 ລຳດັບທີ່ສົ່ງຜົນຕໍ່ການດຳເນີນທຸລະກິດ ແລະນຳເອົາ 5 ບັນຫາມາພິຈາລະນາ ເພື່ອສະຫຼຸບສາເຫດ ແລະ ແນວທາງໃນການປ້ອງກັນ ຫຼື ແກ້ໄຂ, 1) ເຈົ້າຂອງໂຄງການບໍ່ຊຳລະຄ່າກໍ່ສ້າງຕາມທີ່ໄດ້ຕົກລົງກັນໃນສັນຍາ ສາເຫດເນື່ອງມາຈາກເຈົ້າຂອງໂຄງການຂາດການປະເມີນລາຍຮັບຂອງຕົນຢ່າງຖີ່ຖ້ວນ ພຽງແຕ່ຄາດຄະເນລາຍຮັບໃນແຕ່ລະປີແລ້ວ ອະນຸມັດຫຼາຍໆໂຄງການພ້ອມໆ ກັນ ວິທີແກ້ໄຂຄວນກວດສອບແຫຼ່ງທຶນເຈົ້າຂອງໂຄງການກໍ່ສ້າງລວມທັງສຶກສາລະບຽບການເບີກຈ່າຍ, 2) ຂາດການປະເມີນສັກກາຍຍະພາບທາງດ້ານການເງິນກ່ອນຮັບງານ ບໍລິສັດກໍ່ສ້າງກ່ອນຈະປະມູນໂຄງການ ຄວນຈະສຶກສາລາຍລະອຽດເຖິງແຫຼ່ງທີ່ມາຂອງແຫຼ່ງທຶນທີ່ໃຊ້ໃນການຈ່າຍເງິນຄ່າກໍ່ສ້າງຂອງເຈົ້າຂອງໂຄງການ,ໃນທາງຝ່າຍບໍລິສັດກໍ່ສ້າງກໍຄວນສຶກສາລາຍລະອຽດດ້ານຕ່າງໆກ່ອນເຂົ້າປະມູນໂຄງການ, 3) ຂາດການວາງແຜນການໃຊ້ບຸກຄະລາກອນ ສາເຫດມາຈາກຜູ້ຮັບເໝົາບາງຄົນບໍ່ມີປະສົບການໃນການບໍລິຫານວຽກ, ທັງຕ້ອງການປະຢັດລາຍຈ່າຍ ວິທີແກ້ໄຂ ຜູ້ບໍລິຫານບໍລິສັດຕ້ອງມີປະສົບການພຽງພໍ ເພື່ອວາງແຜນດຳເນີນໂຄງການໃນການໃຊ້ຊັບພະຍາກອນຢ່າງມີປະສິດທິພາບ, 4) ຂາດແຮງຈູງໃຈໃນການເຮັດວຽກ ມີຜົນກະທົບໂດຍກົງຕໍ່ຄຸນນະພາບການກໍ່ສ້າງອາຄານລວມທັງສົ່ງຜົນຕໍ່ການດຳເນີນທຸລະກິດ ສາເຫດຫຼັກໆແມ່ນໄດ້ຮັບຄ່າແຮງຕ່ຳ, ຂາດຄວາມເອົາໃຈໃສ່ຂອງຜູ້ບໍລິຫານໂຄງການຕໍ່ຜູ້ຢູ່ໃຕ້ການບັງຄັບບັນຊາ ວິທີແກ້ໄຂ ການບໍລິຫານວຽກຄວນມີສະຫວັດດີການໃຫ້ແກ່ນັກວິຊາການ,ຊ່າງແລະກຳມະກອນ, ມີການຜ່ອນສັ້ນ-ຜ່ອນຍາວ ແລະ ຂະແໜງການທີ່ກ່ຽວຂ້ອງພາກລັດຄວນມີການກຳນົດເງິນເດືອນໃຫ້ເປັນເອກະພາບຕາມຄວາມຮູ້ ຄວາມສາມາດທີ່ໄດ້ຮັບການສຶກສາມາ, 5) ສະພາວະເງິນເຟີ້ ແລະ ການຂາດສະພາບຄ່ອງທາງເສດຖະກິດຂອງປະເທດ ຈາກສະພາບເສດຖະກິດໂດຍລວມຂອງໂລກ ແລະ ສະພາບເສດຖະກິດພາຍໃນຂອງປະເທດ ສົ່ງຜົນໃຫ້ຄ່າເງິນກີບຕົກຕ່ຳໃນບາງຄັ້ງ ອັດຕາເງິນເຟີ້ກໍ່ເພີ່ມຂຶ້ນ ສົ່ງຜົນໂດຍກົງຕໍ່ການດຳເນີນອຸດສະຫະກຳກໍ່ສ້າງໃນລາວ ສາເຫດແມ່ນມາຈາກສະພາບເສດຖະກິດພາຍໃນບໍ່ມີຄວາມໝັ້ນທ່ຽງ, ການຂາດດູນການຄ້າສູງ, ລັດບໍ່ສາມາດເກັບລາຍຮັບເຂົ້າລັດງົບປະມານໄດ້, ວິທີແກ້ໄຂໃນສ່ວນບໍລິສັດກໍ່ສ້າງກໍຕ້ອງປະເມີນສະພາບເສດຖະກິດຢ່າງລະອຽດກ່ອນຂໍຮັບງານເພື່ອສະກັດກັ້ນການເກີດບັນຫາຕາມມາຈາກ ສອງປັດໄຈພື້ນຖານທີ່ສົ່ງຜົນກະທົບຕໍ່ການດຳເນີນທຸລະກິດຮັບເໝົາກໍ່ສ້າງອາຄານໃນເຂດສີ່ແຂວງພາກໃຕ້ຂອງ ສປປ ລາວ ມີປັດໄຈດ້ານພາຍໃນຂອງໂຄງການສົ່ງຜົນກະທົບຫຼາຍກວ່າ ຊຶ່ງປະກອບມີ: ດ້ານການເງິນ ແລະ ງົບປະມານທີ່ໃຊ້ເຂົ້າໃນການກໍ່ສ້າງມີຄ່າສະເລ່ຍລວມຢູ່ທີ່ 4.18 ຄິດໄລ່ເປັນ 100%, ປັດໄຈນີ້ມີຄວາມສຳຄັນຫຼາຍທີ່ສຸດ ເພາະວ່າໂຄງການກໍ່ສ້າງຈະສຳເລັດ ແລະ ມີປະສິດທິພາບສູງໄດ້ ຕ້ອງອາໄສ ສະພາບຄ່ອງທາງດ້ານເງິນທຶນໝູນວຽນຂອງບໍລິສັດຜູ້ຮັບເໝົາກໍ່ສ້າງ ແລະ ອີກປັດໄຈໜຶ່ງທີ່ຄວາມສຳຄັນຫຼາຍທີ່ສຸດໄດ້ແກ່ ປັດໄຈທາງດ້ານບຸກຄະລາກອນ ແລະ ຜູ້ປະຕິບັດງານມີຄ່າສະເລ່ຍຢູ່ທີ່ 4.14 ຄິດເປັນ 100% ປັດໄຈດ້ານນີ້ຍິ່ງມີຄວາມສຳຄັນຫຼາຍໃນການດຳເນີນໂຄງການກໍ່ສ້າງ, ການບໍລິຫານໂຄງການທີ່ມີປະສິດທິພາບຕ້ອງມີການວາງແຜນຊັດເຈນໃນການໃຊ້ຊັບພະຍາກອນບຸກຄົນເພື່ອຕອບສະໜອງໃນອຸດສະຫະກຳການກໍ່ສ້າງ ທັງມີຈຳນວນພຽງພໍ,ຕ້ອງເປັນຜູ້ທີ່ມີຄວາມສາມາດ, ຊຳນານໃນວຽກທີ່ຈະເຮັດ ແລະ ຕໍ່ມາແມ່ນດ້ານການຈັດຫາແຫຼ່ງວຽກ ມີຄ່າສະເລ່ຍຢູ່ທີ່ 3.85 ຄິດເປັນ 83.33% ປັດໄຈນີ້ມີຄວາມສຳຄັນຫຼາຍ ການຊອກຫາແຫຼ່ງວຽກປຽບເໝືອນໝາກຫົວໃຈຫຼັກຂອງການກໍ່ສ້າງ, ຊຶ່ງຈະຊອກຫາວິທີໃນການປະມູນຮັບວຽກໃຫ້ຢູ່ໃນລາຄາທີ່ໄດ້ຄິດໄລ່ໄວ້, ປັດໄຈທາງເຄື່ອງມື ແລະ ເຄື່ອງກົນຈັກກໍ່ສ້າງມີຄ່າສະເລ່ຍຢູ່ທີ່ 3.78 ຄິດໄລ່ເປັນ 83.33% ປັດໄຈນີ້ມີຄວາມສຳຄັນເພາະວ່າ ໃນການດຳເນີນໂຄງການກໍ່ສ້າງຕ້ອງມີເຄື່ອງກົນຈັກພຽງພໍແລະມີຄຸນນະພາບ ເພື່ອເຮັດໃຫ້ການດຳເນີນໂຄງການໄປໄດ້ຢ່າງຕໍ່ເນື່ອງ ແລະ ເກີດປະສິດທິຜົນ ແລະ ຕໍ່ໄປແມ່ນປັດໄຈດ້ານວັດສະດຸ ອຸປະກອນກໍ່ສ້າງ ມີຄ່າສະເລ່ຍຢູ່ທີ່ 3.74 ຄິດໄລ່ເປັນ 71.42% ປັດໄຈນີ້ເປັນສິ່ງທີ່ຂາດບໍ່ໄດ້ເຊັ່ນກັນໃນການດຳເນີນໂຄງການກໍ່ສ້າງ, ວັດສະດຸອຸປະກອນທີ່ໃຊ້ ຕ້ອງມີຄຸນນະພາບພຽງພໍທີ່ສາມາດໃຊ້ງານໄດ້ຢ່າງມີປະສິດທິພາບຕາມຂໍ້ກຳນົດຂອງແຜນຜັງກໍ່ ສ້າງ

ແລະ ສາມາດຕອບສະໜອງຕາມວັນເວລາທີ່ກຳນົດໄວ້ໃນແຜນດຳເນີນການກໍ່ສ້າງ. ສຳລັບປັດໄຈພາຍນອກໂຄງການແມ່ນມີຄ່າສະເລ່ຍລວມຢູ່ທີ່ 3.74 ຄິດໄລ່ເປັນ 60%.

**4. ວິພາກຜົນ**

ການສຶກສາດ້ານຮູບແບບແລະລັກສະນະການດຳເນີນທຸລະກິດຮັບເໝົາກໍ່ສ້າງໃນນະຄອນປາກເຊ ສປປ ລາວ ສ່ວນໃຫຍ່ຈະດຳເນີນທຸລະກິດໃນຮູບແບບເປັນເຈົ້າຂອງຜູ້ດຽວ, ຊຶ່ງມີຄວາມແຕກຕ່າງກັນກັບຜົນການສຶກສາຂອງ ( Koeim & Leupasert, 2006) ແລະ (Sengthamthone, 1999) ການສຶກສາໃນປະເທດໄທສ່ວນໃຫຍ່ຈະດຳເນີນທຸລະກິດແບບຫ້າງຫຸ້ນສ່ວນຫຼາຍທີ່ສຸດ, ລວມທັງແຫຼ່ງທຶນທີ່ບໍລິສັດໃນເຂດພື້ນທີ່ສຶກສານຳມາລົງທຶນໃນທຸລະກິດຮັບເໝົາກໍ່ສ້າງ ສ່ວນຫຼາຍຈະເປັນເງິນທຶນສ່ວນບຸກຄົນ, ເງິນທີ່ໄດ້ຈາກການກູ້ຢືມຈຳນວນໜຶ່ງ ແລະ ອີກຈຳນວນໜຶ່ງແມ່ນເງິນທີ່ໄດ້ຈາກການຮ່ວມທຶນກັນ , ການຕິດຕໍ່ ຫຼື ປະມູນຮັບງານຂອງບໍລິສັດກໍ່ສ້າງໃນໄລຍະຜ່ານມາແມ່ນຕິດຕໍ່ປະມູນຮັບວຽກໂດຍກົງຈາກເຈົ້າຂອງໂຄງການ ແລະ ອີກຈຳນວນໜຶ່ງແມ່ນທັງຕິດຕໍ່ປະມູນເອງ ແລະ ແບບຮັບເໝົາຊ່ວງຈາກບໍລິສັດອື່ນ.

ຈາກການສຶກສາວິໃຈໄລຍະຜ່ານມາ ກ່ຽວກັບປັດໄຈທີ່ສົ່ງຜົນກະທົບຕໍ່ການດຳເນີນທຸລະກິດຮັບເໝົາກໍ່ສ້າງໃນປະທດບ້ານໃກ້ເຮືອນຄຽງ, ໂດຍສະເພາະປະເທດທີ່ພັດທະນາແລ້ວ ຄືປະເທດໄທ ດັ່ງທີ່ Koeim & Leupasert (2006) ໄດ້ສຶກສາປັດໄຈທີ່ສົ່ງຜົນກະທົບຕໍ່ການດຳເນີນທຸລະກິດຮັບເໝົາກໍ່ສ້າງຂອງຜູ້ຮັບເໝົາໃນຈັງຫວັດລຳປາງ ພົບວ່າ ປັດໄຈທີ່ສົ່ງຜົນກະທົບຕໍ່ການດຳເນີນທຸລະກິດຮັບເໝົາກໍ່ສ້າງແບ່ງເປັນ 5 ກຸ່ມປັດໄຈຫຼັກຄື ປັດໄຈດ້ານການເງິນ, ປັດໄຈດ້ານວັດສະດຸອຸປະກອນກໍ່ສ້າງ, ປັດໄຈດ້ານເຄື່ອງກົນຈັກ, ປັດໄຈດ້ານບຸກຄະລາກອນ ແລະ ປັດໄຈດ້ານສະພາບແວດລ້ອມ ກົດລະບຽບຂໍ້ບັງຄັບ, ແລ້ວນຳປັດໄຈຍ່ອຍໃນແຕ່ລະກຸ່ມທີ່ໄດ້ມາວິເຄາະເພີ່ມເຕີມ ເຫັນວ່າໃນກຸ່ມປັດໄຈດ້ານການເງິນ ເຊັ່ນ: ການຂາດການວາງແຜນການເງິນທີ່ດີ, ບໍ່ມີເງິນລົງທຶນພຽງພໍ ແລະ ຊອກຫາແຫຼ່ງກູ້ຢືມເງິນລົງທຶນບໍ່ໄດ້ ເປັນປັດໄຈທີ່ບໍລິສັດຮັບເໝົາກໍ່ສ້າງໃຫ້ຄວາມສຳຄັນເປັນອັນດັບຕົ້ນໆ ສ່ວນປັດໄຈດ້ານວັດສະດຸອຸປະກອນກໍ່ສ້າງ ພົບວ່າ ການຂາຍວັດສະດຸກໍ່ສ້າງເກີນລາຄາ-ການຂຶ້ນລາຄາລ່ວງໜ້າ, ຂາດການວາງແຜນຄວບຄຸມການໃຊ້ວັດສະດຸ, ວັດສະດຸກໍ່ສ້າງຂາດຕະຫຼາດແລະການກັກຕຸນສິນຄ້າຂອງຮ້ານຄ້າ ເປັນປັດໄຈທີ່ຜູ້ຮັບເໝົາໃຫ້ຄວາມສຳຄັນ, ລວມທັງປັດໄຈດ້ານອື່ນໆເຊັ່ນ:ຂາດການວາງແຜນການໃຊ້ງານເຄື່ອງກົນຈັກ, ຂາດການວາງແຜນດ້ານບຸກຄະລາກອນ, ການຈັດອັດຕາກຳລັງ, ບຸກຄະລາກອນຂາດທັກສະໃນການເຮັດວຽກ ຂາດຄວາມຊຳນານ ແລະ ຂາດຄວາມຮູ້ຄວາມເຂົ້າໃຈໃນການປະຕິບັດວຽກ, ບັນຫາລາຄາເຫຼັກເສັ້ນແລະຊີເມັນ, ບັນຫາການຂາດແຄນແຮງງານທີ່ມີສີມື ບັນຫາກົດລະບຽບແລະຂໍ້ບັງຄັບ, ຂໍ້ຈຳກັດຕ່າງໆຂອງພາກລັດເປັນປັດໄຈທີ່ຜູ້ຮັບເໝົາໃຫ້ຄວາມສຳຄັນເປັນລຳດັບຕົ້ນໆ. ຈາກນັ້ນ ຍັງໄດ້ສຶກສາໃນ ຈັງຫວັດນະຄອນສະຫວັນ (Sengthamthone, 1999) ກ່ຽວການຈັດການທຸລະກິດຮັບເໝົາກໍ່ສ້າງໃນອຳເພີເມືອງ ຈັງຫວັດນະຄອນສະຫວັນ ພົບວ່າ ປັດໄຈສຳຄັນທີ່ສຸດທີ່ສົ່ງຜົນກະທົບຕໍ່ການດຳເນີນງານຮັບເໝົາກໍ່ສ້າງແມ່ນປັດໄຈດ້ານເງິນທຶນ, ປັດໄຈດ້ານກຳລັງຄົນ, ປັດໄຈດ້ານວັດສະດຸອຸປະກອນ, ປັດໄຈດ້ານເຄື່ອງກົນຈັກ, ປັດໄຈດ້ານສະພາວະແວດລ້ອມ ແລະ ປັດໄຈດ້ານກົດລະບຽບ ຂໍ້ບັງຄັບຕ່າງໆ ຊຶ່ງປັດໄຈຕ່າງໆເຫຼົ່ານີ້ຖືວ່າເປັນ ໝາກຫົວໃຈຂອງການບໍລິຫານບໍລິສັດຮັບເໝົາກໍ່ສ້າງ ຊຶ່ງມີຄວາມສອດຄ່ອງກັນ, ສະນັ້ນການບໍລິຫານທຸລະກິດຮັບເໝົາກໍ່ສ້າງສົມຄວນຢ່າງຍິ່ງທີ່ຈະຕ້ອງຮູ້ປັດໄຈສ່ຽງໃນການບໍລິຫານ ເພື່ອໃຫ້ການດຳເນີນໂຄງການເປັນໄປຕາມແຜນເວລາ, ງົບປະມານ ແລະ ການຄວບຄຸມນະພາບຂອງງານກໍ່ສ້າງລວມທັງ (Soulasakhone, 2006) ບັນຫາສຳຄັນທີ່ມີຜົນກະທົບຕໍ່ຄຸນນະພາບຂອງໂຄງການກໍ່ສ້າງໃນປະເທດໄທ ໂຄງການກໍ່ສ້າງທີ່ບໍ່ປະສົບຄວາມສຳເລັດສ່ວນໜຶ່ງເນື່ອງມາຈາກມີບັນຫາດ້ານຄຸນນະພາບຂອງງານກໍ່ສ້າງ ຊຶ່ງໃນປັດຈຸບັນ ຫຼາຍໂຄງການມີບັນຫາໃນເລື່ອງຄຸນນະພາບໂຄງການບໍ່ໄດ້ມາດຕະຖານ, ຜູ້ຮັບເໝົາກໍ່ສ້າງຫຼາຍບໍລິສັດມີບັນຫາໃນເລື່ອງຂອງແຜນການດຳເນີນງານແລະຂະບວນການເຮັດວຽກ (Arditi, 1998) ປັດໄຈທີ່ສົ່ງຜົນຕໍ່ຄຸນນະພາບຂອງວົງຈອນງານກໍ່ສ້າງທີ່ປະກອບດ້ວຍ ຂັ້ນຕອນໃນການອອກແບບ, ຂັ້ນຕອນການກໍ່ສ້າງ ແລະ ຂັ້ນຕອນການດຳເນີນງານ ຄວາມເອົາໃຈໃສ່, ຄວາມເປັນຜູ້ນຳໃນການບໍລິຫານ, ການຝຶກອົບຮົມບຸກຄະລາກອນ, ປະສິດທິພາບຂອງການເຮັດວຽກແບບເປັນທີມງານ ແລະ ການຮ່ວມມືຂອງຫຼາຍໆພາກສ່ວນ,ນອກຈາກນັ້ນ ແບບແລະລາຍການປະກອບແບບກໍ່ສ້າງ ການບອກລາຍລະອຽດຂອງວຽກທີ່ມີຢູ່ໃນແຜນຜັງກໍ່ສ້າງ ປະສິດທິພາບຂອງການສື່ສານລະຫວ່າງຜູ້ອອກແບບ ແລະ ຜູ້ຮັບເໝົາກໍ່ສ້າງຝ່າຍຕ່າງໆ ແລະ ຄວາມພຽງພໍຂອງງົບປະມານໃນການບຳລຸງຮັກສາ. Arditi ( 1998) ການກໍ່ສ້າງລະຫວ່າງຊ່ວງໄລຍະເວລາດຳເນີນກິດຈະການກໍ່ສ້າງ ຜູ້ຮັບເໝົາສາມາດກະກຽມກ່ອນຈະລົງມືກໍ່ສ້າງ ເຊັ່ນ: 1) ການກະກຽມວັດສະດຸອຸປະກອນ, ເຄື່ອງກົນຈັກໃຫ້ພຽງພໍກັບຄວາມຕ້ອງການທີ່ຈະໃຊ້, 2) ຈັດຫາແຮງງານ

ທີ່ຈະຕອບສະໜອງກັບໜ້າວຽກໃນແຕ່ລະຊ່ວງເວລາດຳເນີນໂຄງການ, ການວາງແຜນຈັດພື້ນທີ່ການກໍ່ສ້າງກໍ່ມີຄວາມສຳຄັນ ຖ້າການຈັດສັນພື້ນທີ່ຫາກບໍ່ເໝາະສົມກໍ່ຈະເຮັດໃຫ້ເສຍເວລາ ການເຮັດວຽກມີຄວາມຫຍຸ້ງຍາກ ຊຶ່ງມີຄວາມສອດຄ່ອງກັບ Oberlender (1993) ຊ່ວງໄລຍະເວລາຂອງການກໍ່ສ້າງມີຄວາມສຳຄັນຫຼາຍໃນການດຳເນີນໂຄງການກໍ່ສ້າງ, ເມື່ອໂຄງການຈະສຳເລັດຈະຕ້ອງປະກອບມີແຮງງານກໍ່ສ້າງ, ມີຊ່າງທີ່ຊຳນານວຽກກໍ່ສ້າງ ແລະ ຍັງມີຜູ້ຄວບຄຸມລາຍຈ່າຍ ແລະ ຍັງໄດ້ສຶກສາເຖິງຜູ້ບໍລິຫານໂຄງການທີ່ມີຄວາມຮູ້ ຄວາມສາມາດ ແລະ ປະສົບການຫຼາຍເທົ່າໃດ ຍິ່ງສົ່ງຜົນໃຫ້ການບໍລິຫານໂຄງການປະສົບຜົນສຳເລັດແລະມີປະສິດທິພາບສູງທີ່ມີລັກສະນະສຳພັນກັບບົດຄົ້ນຄວ້ານີ້. ຊຶ່ງ Lorthilaphong & Leupasert (2006) ໄດ້ອະທິບາຍປັດໄຈສ່ຽງທີ່ມີຜົນກະທົບຕໍ່ການຄວບຄຸມຄຸນນະພາບຂອງການກໍ່ສ້າງອາຄານ ເນື່ອງຈາກຜູ້ບໍລິຫານວຽກກໍ່ສ້າງ ເປັນບຸກຄົນທີ່ມີຄວາມສຳຄັນຢ່າງຍິ່ງຕໍ່ຄວາມສຳເລັດຂອງໂຄງການ ສະນັ້ນ ຜູ້ບໍລິຫານໂຄງການຈະຕ້ອງມີຄວາມຮູ້ດ້ານການບໍລິຫານຈັດການ, ທັກສະສ່ວນບຸກຄົນໃນການບໍລິຫານ, ກຸ່ມທັກສະຄວາມຮູ້ດ້ານວິສະວະກຳແລະເທັກໂນໂລຊີ ການບໍລິຫານໂຄງການກໍ່ສ້າງເປັນສິ່ງຈຳເປັນຕ້ອງໄດ້ວາງແຜນຈັດການຄວາມສ່ຽງໄວ້ລ່ວງໜ້າ ເພື່ອປ້ອງກັນບັນຫາຕ່າງໆ ບໍ່ໃຫ້ເກີດຂຶ້ນຕໍ່ກັບໂຄງການໂດຍທີ່ ປັດໄຈສ່ຽງໃນການບໍລິຫານງານກໍ່ສ້າງທີ່ນຳມາພິຈາລະນາປະກອບດ້ວຍ 2 ດ້ານ ຄື: 1) ປັດໄຈພາຍໃນ ໄດ້ແກ່ ດ້ານບຸກຄະລາກອນ, ເຄື່ອງມື ເຄື່ອງກົນຈັກ, ວັດສະດຸກໍ່ສ້າງ, ການບໍລິຫານງານກໍ່ສ້າງ, ງົບປະມານການກໍ່ສ້າງ 2) ປັດໄຈພາຍນອກ ໄດ້ແກ່ ປັດໄຈທີ່ບໍ່ສາມາດຄວບຄຸມໄດ້ ເຊັ່ນ: ລາຄານ້ຳມັນ, ລາຄາວັດສະດຸ, ສະພາບອາກາດ, ແລະ ປັດໄຈທາງດ້ານເສດຖາກິດ. ນອກຈາກນີ້ແລ້ວການບໍລິຫານໂຄງການກໍ່ສ້າງທີ່ມີປະສິດທິພາບແລ້ວຍັງຕ້ອງໄດ້ເລືອກໃຊ້ຮູບແບບຂອງສັນຍາແລະເງື່ອນໄຂຕ່າງໆໃນສັນຍາກໍ່ສ້າງມາພິຈາລະນາ ຄືດັ່ງ Chovichien (2001) ການດຳເນີນງານກໍ່ສ້າງຕາມສັນຍາຈ້າງກໍ່ສ້າງຂອງລັດໃນ ລາວ, ໄທ ແລະ ຫວຽດນາມ, ສັນຍາກໍ່ສ້າງ ແລະ ການເລືອກໃຊ້ຮູບແບບຂອງສັນຍາມີຄວາມຈຳເປັນ ແລະ ສຳຄັນ ທັງເປັນໂຕຊີ້ວັດແຫ່ງຜົນສຳເລັດຂອງໂຄງການ ເພາະເນື້ອຫາສັນຍາຕ້ອງໄດ້ລະບຸທຸກອົງປະກອບແລະເງື່ອນໄຂໃນການດຳເນີນງານລວມທັງມື້ເລີ່ມຕົ້ນໂຄງການຈົນເຖິງມືຊິ້ນສຸດ, ຊຶ່ງການສຶກສາດັ່ງກ່າວມີຄວາມສອດຄ່ອງກັນກັບ Setthabout & Subsomphon (2006) ບັນຫາໃນການໃຊ້ສັນຍາຈ້າງອອກແບບແລະກໍ່ສ້າງ ແລະ ແນວທາງໃນການປ້ອງກັນໃນໂຄງການພາກສ່ວນຂອງລັດ" ບັນຫາຕ່າງໆທີ່ເກີດຂຶ້ນຈາກການໃຊ້ສັນຍາຈ້າງອອກແບບແລະກໍ່ສ້າງຂອງໂຄງການພາກລັດ ໄດ້ແກ່ ບັນຫາຂໍ້ບົກພ່ອງຂອງຮູບແບບເອກະສານສັນຍາ, ບັນຫາການປ່ຽນແປງວຽກ, ບັນຫາຄ່າໃຊ້ຈ່າຍໂຄງການເພີ່ມຂຶ້ນ, ບັນຫາໄລຍະເວລາເພີ່ມຂຶ້ນ ນອກຈາກນີ້ຍັງມີບັນຫາທີ່ເກີດຂຶ້ນເນື່ອງຈາກປັດໄຈອື່ນເຊັ່ນ ການເວນຄືນທີ່ດິນ, ການຂັດຂ້ອງຂອງລະບົບສາທາລະນູປະໂພກ ແລະ ບັນຫາໃນຂະບວນການແກ້ໄຂຂໍ້ຂັດແຍ່ງ ບັນຫາຕ່າງເຫຼົ່ານີ້ລ້ວນແຕ່ເປັນອຸປະສັກໃນການພັດທະນາອຸດສະຫະກຳກໍ່ສ້າງ ໃນເມື່ອມີບັນຫາເກີດຂຶ້ນແລ້ວກໍຕ້ອງຫາວິທີໃນການແກ້ໄຂ ດັ່ງທີ່ Thongthammasad (2007) ກ່ຽວກັບການຮຽກຮ້ອງສິດທິໃນງານກໍ່ສ້າງໃນ ລາວ, ໄທ ແລະ ຫວຽດນາມ ເພື່ອເຮັດໃຫ້ການດຳເນີນໂຄງການເປັນໄປຕາມແຜນທີ່ວາງໄວ້ ລວມທັງ Chiladamkerng (2007) ອະທິບາຍກ່ຽວກັບການພັດທະນາຄຸນນະພາບໃນການກໍ່ສ້າງ ພ້ອມທັງຄວາມສຳພັນ ແລະ ຄວາມຮັບຜິດຊອບ ໃນແຕ່ລະຂັ້ນຕອນຂອງການຄວບຄຸມຄຸນນະພາບຂອງໂຄງການກໍ່ສ້າງແຕ່ລະໂຄງການ ຊຶ່ງມີຄວາມຮັບຜິດຊອບຮ່ວມກັນໃນການຄວບຄຸມຄຸນນະພາບຂອງໂຄງການກໍ່ສ້າງ ລະຫວ່າງຜູ້ທີ່ເປັນເຈົ້າຂອງໂຄງການ ແລະ ຜູ້ປະກອບການຮັບເໝົາກໍ່ສ້າງ ແລະ ອີກບັນຫາສຳຄັນດັ່ງທີ່ David and Murad (1999) ປັດໄຈທີ່ສົ່ງຜົນກະທົບຕໍ່ຄຸນນະພາບການກໍ່ສ້າງອາຄານ ຊຶ່ງປະເມີນຜົນຈາກໄລຍະເວລາການກໍ່ສ້າງ ແລະ ຄັດເລືອກຜູ້ຮັບເໝົາກໍ່ສ້າງທີ່ມີປະສົບການເຮັດວຽກເທົ່າໆກັນ ແລະ ມີສາຍງານໃນວຽກທີ່ກ່ຽວຂ້ອງກັບບວນການຄວບຄຸມການກໍ່ສ້າງ ຊຶ່ງປະກອບມີ ດ້ານເຕັກນິກການບໍລິຫານ, ການໃຊ້ງົບປະມານໃນການກໍ່ສ້າງ, ການວາງແຜນວຽກພິເສດ ແລະ ລະບົບກວດສອບວຽກລ່ວງໜ້າ ພ້ອມທັງການວາງແຜນທີມງານກໍ່ສ້າງທີ່ສອດຄ່ອງກັບໜ້າວຽກແຕ່ລະກິດຈະກຳຂອງການດຳເນີນໂຄງການ ຊຶ່ງ Oberlender ( 1993) ທີມງານກໍ່ສ້າງ (teamwork) ວ່າ ສາມາດພັດທະນາການເຮັດວຽກໃນໂຄງການກໍ່ສ້າງໃຫ້ກ້າວໄປສູ່ວຽກທີ່ມີຄຸນະພາບສູງໄດ້ ເນື່ອງຈາກວ່າວຽກກໍ່ສ້າງເປັນວຽກທີ່ສະຫຼັບສັບຊ້ອນ ມີຫຼາຍພາກສ່ວນກ່ຽວຂ້ອງ ສະນັ້ນຈຶ່ງຕ້ອງການການສື່ສານຢ່າງຊັດເຈນ ເຮັດວຽກຢ່າງລະອຽດອ່ອນ, ຖືກຕ້ອງຕາມຫຼັກວິຊາການ, ສາມາດກວດສອບໄດ້ໃນທຸກພາກສ່ວນ (Abdel - Razek,1998) ປັດໄຈຫຼັກທີ່ສົ່ງຜົນກະທົບຕໍ່ຄຸນນະພາບ ການກໍ່ສ້າງອາຄານໃນປະເທດ ເອຢິບ ເລື່ອງສັນຍາ ຫຼື ຂໍ້ຕົກລົງໃນການກໍ່ສ້າງທີ່ຈະສາມາດປັບປຸງຄຸນນະພາບຂອງການກໍ່ສ້າງໄດ້ (Chan and Tam, 2000) ປັດໄຈທີ່ສົ່ງຜົນກະທົບຕໍ່ຄຸນນະພາບການກໍ່ສ້າງ ຊຶ່ງໄດ້ພິຈາລະນາ

ເຖິງ 77 ປັດໃຈ ຈາກກຸ່ມປັດໃຈຫຼັກ 6 ປັດໃຈປະກອບດ້ວຍ ເຈົ້າຂອງໂຄງການ, ລັກສະນະພິເສດຂອງໂຄງການ, ສະພາບແວດລ້ອມຂອງໂຄງການ, ການປະຕິບັດງານໃນໂຄງການ ແລະ ການບໍລິຫານໂຄງການ, ຜົນທີ່ໄດ້ຈາກການສຶກສາພົບວ່າ : ສິ່ງທີ່ສຳຄັນທີ່ສຸດຂອງຄຸນນະພາບການກໍ່ສ້າງ ຄື ການປັບປຸງການເຮັດວຽກແບບເປັນທີມງານກໍ່ສ້າງ, ປັດໃຈທີ່ສົ່ງຜົນກະທົບຕໍ່ຄຸນນະພາບຂອງໂຄງການກໍ່ສ້າງອາຄານໃນຊ່ວງໄລຍະການກໍ່ສ້າງ, ຜູ້ຄວບຄຸມໃນເລື່ອງຄຸນນະພາບຂອງໂຄງການກໍ່ສ້າງແມ່ນປັດໃຈ ໜຶ່ງທີ່ເຮັດໃຫ້ໂຄງການສຳເລັດ ແລະ ມີຫຼາຍປັດໃຈທີ່ມີອິດທິພົນຕໍ່ຄຸນນະພາບຂອງໂຄງການກໍ່ສ້າງ (Lorthilaphong & Leupasert, 2006) ການບໍລິຫານວຽກກໍ່ສ້າງ ເປັນສິ່ງຈຳເປັນທີ່ສຸດໃນການດຳເນີນໂຄງການ ຊຶ່ງຈະເລີ່ມຕົ້ນກ່ອນຈະປະມູນໂຄງການ ຈົນໄດ້ຮັບໂຄງການ ຫຼື ໄດ້ດຳເນີນການກໍ່ສ້າງຊຶ່ງຜູ້ບໍລິຫານວຽກກໍ່ສ້າງຈະຕ້ອງລົງສຳຫຼວດພື້ນທີ່ການກໍ່ສ້າງ ແລະ ສະພາບແວດລ້ອມສະຖານທີ່ກໍ່ສ້າງເພື່ອນຳມາປະເມີນມູນຄ່າ, ການເກັບກຳຂໍ້ມູນຂອງການສຳຫຼວດພື້ນທີ່ການກໍ່ສ້າງ ມີຄວາມສຳຄັນຫຼາຍ ຖ້າຂໍ້ມູນບໍ່ຄົບຖ້ວນຫຼືບໍ່ພຽງພໍ ບັນຫານີ້ໄດ້ສົ່ງຜົນກະທົບຕໍ່ລະບົບການວາງແຜນ (Chovichien, 2001) ປັດໃຈທີ່ມີຄວາມສ່ຽງຕໍ່ການບໍລິຫານງານກໍ່ສ້າງໂຄງການລົດໄຟຟ້າໃນເຂດກຸງເທບມະຫານະຄອນ ຊຶ່ງໄດ້ວິເຄາະຫາປັດໃຈທີ່ສົ່ງຜົນກະທົບຕໍ່ການກໍ່ສ້າງລະບົບລົດໄຟ BTS ແລະ ການກໍ່ສ້າງລະບົບລົດໄຟຄວາມໄວສູງແລະຊອກຫາສາເຫດທີ່ເປັນຜົນກະທົບ ແລະ ຄວາມຕໍ່ເນື່ອງຂອງໂຄງການແຕ່ລະໂຄງການພ້ອມທັງສຶກສາຫຼາຍດ້ານເຊັ່ນ: 1) ດ້ານການໃຊ້ຊັບພະຍາກອນ, 2) ຄວາມຮ່ວມມື, 3) ສິ່ງແວດລ້ອມ ແລະ ທີ່ຕັ້ງຂອງໂຄງການ, 4) ນະໂຍບາຍ ແລະ ແຜນຂອງພາກສ່ວນລັດຖະບານ ແລະ 5) ຄວາມບໍ່ແນ່ນອນຂອງນະໂຍບາຍ ແລະ ປັດໃຈດ້ານການບໍລິຫານຈັດການ. ສຳລັບປັດໃຈທີ່ສົ່ງຜົນຕໍ່ການດຳເນີນທຸລະກິດຮັບເໝົາກໍ່ສ້າງໃນນະຄອນປາກເຊ ແຂວງຈຳປາສັກ ສປປ ລາວ ແມ່ນມີຄວາມສອດຄ່ອງກັບກັບການສຶກສາທີ່ຜ່ານມາໃນປະເທດໄທ (Koeim & Leupasert, 2006) ແລະ (Sengthamthone, 1999) ແລະ (Rothiraphong & Leupasert, 2005).

## 5. ສະຫຼຸບ

ບໍລິສັດກໍ່ສ້າງໃນນະຄອນປາກເຊ ແຂວງຈຳປາສັກສ່ວນຫຼາຍແລ້ວ ແມ່ນເປັນເຈົ້າຂອງຜູ້ດຽວ ແລະ ມີຈຳນວນໜ້ອຍທີ່ເປັນຮຸ້ນສ່ວນຮ່ວມທຶນຊຶ່ງເປັນກໍລະນີໝູ່ເພື່ອນກັນ, ອ້າຍເອື້ອຍນ້ອງຄິງ ທີ່ລົງທຶນຮ່ວມກັນເພື່ອບໍລິຫານທຸລະກິດຮ່ວມກັນກັນ. ແຫຼ່ງທຶນທີ່ບໍລິສັດນຳມາລົງທຶນໃນທຸລະກິດຮັບເໝົາກໍ່ສ້າງ ສ່ວນຫຼາຍຈະເປັນເງິນທຶນສ່ວນບຸກຄົນ, ເງິນທີ່ໄດ້ຈາກການກູ້ຢືມ ແລະ ອີກຈຳນວນໜຶ່ງແມ່ນເງິນທີ່ໄດ້ຈາກການຮ່ວມທຶນກັນ, ການຕິດຕໍ່ ຫຼື ປະມູນຮັບງານຂອງບໍລິສັດກໍ່ສ້າງໃນໄລຍະຜ່ານມາແມ່ນຕິດຕໍ່ປະມູນຮັບວຽກໂດຍກົງຈາກເຈົ້າຂອງໂຄງການ ແລະ ອີກຈຳນວນໜຶ່ງແມ່ນທັງຕິດຕໍ່ປະມູນເອງ ແລະ ແບບຮັບເໝົາຊ່ວງຈາກບໍລິສັດອື່ນ. ການດຳເນີນທຸລະກິດຮັບເໝົາກໍ່ສ້າງໃນໄລຍະຫ້າປີຜ່ານມາ ພົບວ່າ ບໍລິສັດທີ່ມີຜົນກຳໄລແມ່ນປະມານຫ້າສິບສ່ວນຮ້ອຍ, ບໍລິສັດທີ່ເທົ່າທຶນຄິດເປັນຊາວສ່ວນຮ້ອຍ ແລະ ບໍລິສັດທີ່ຂາດທຶນ ຊຶ່ງຄິດເປັນຊາວສ່ວນຮ້ອຍ. ແລະການດຳເນີນທຸລະກິດຮັບເໝົາກໍ່ສ້າງໃນໄລຍະຫ້າປີຜ່ານມາ ພົບວ່າ ບໍລິສັດກໍ່ສ້າງໄດ້ຮັບໂຄງການຈຳນວນ 2-4 ໂຄງການຕໍ່ປີ ແລະ ມີມູນຄ່າແຕ່ (ສິບພັນລ້ານກີບ) ເຖິງ (ຊາວພັນລ້ານກີບ) ສ່ວນຫຼາຍແລ້ວແມ່ນເປັນໂຄງການທີ່ມາຈາກພາກສ່ວນຂອງລັດຖະບານ.

ປັດໃຈທີ່ສົ່ງຜົນຕໍ່ການດຳເນີນທຸລະກິດຮັບເໝົາກໍ່ສ້າງກໍ່ສ້າງໄດ້ແກ່ : 1) ເຈົ້າຂອງໂຄງການບໍ່ຊຳລະຄ່າກໍ່ສ້າງຕາມທີ່ໄດ້ຕົກລົງກັນໃນສັນຍາ, 2) ຂາດການປະເມີນສັກກາຍະພາບທາງດ້ານການເງິນກ່ອນຮັບງານ, 3) ຂາດການວາງແຜນການໃຊ້ບຸກຄະລາກອນ, 4) ການຂາດແຮງຈູງໃຈໃນການເຮັດວຽກ (ເງິນເດືອນໜ້ອຍ), 5) ສະພາວະເງິນເຟີ້ ແລະ ການຂາດສະພາບຄ່ອງທາງເສດຖະກິດຂອງປະເທດ, 6) ເງິນທຶນຈົດທະບຽນ ແລະ ຜົນງານຂອງບໍລິສັດ,7) ການຂາຍວັດສະດຸເກີນລາຄາ ແລະ ການຂຶ້ນລາຄາລ່ວງໜ້າ, 8) ຂາດການວາງແຜນໃຊ້ງານເຄື່ອງກົນຈັກ, 9) ຂາດການວາງແຜນ ແລະ ຄວບຄຸມການໃຊ້ວັດສະດຸ, 10) ຄູ່ແຂ່ງທີ່ເປັນບໍລິສັດຈາກຕ່າງແຂວງ ຫຼື ຕ່າງປະເທດ, 11) ບັນຫາການຂາດແຄນຜູ້ຮັບເໝົາຍ່ອຍ ແລະ ແຮງງານທີ່ມີສີມື, 12) ການຊຸກຍູ້-ສົ່ງເສີມ ແລະ ໃຫ້ຄວາມຮູ້ດ້ານເຕັກນິກການກໍ່ສ້າງທີ່ທັນສະໄໝຈາກພາກສ່ວນລັດ

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ແກພາກສ່ວນໃດ ພາກສ່ວນໜຶ່ງ, ກໍລະນີມີການລະເມີດໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ


Abdel-Razek, R. H. (1998). Factors affecting construction quality in Egypt: Identification and relationship were very

important. Engineering, Construction, and Architectural Management, 5(3), 220-227.

Arditi, D. (1998). Factors that affect process quality in the life cycle of building project, Journal of Construction Engineering and Management, 119(3),194-203.

Chan, A. P. C, & Tam, C. M. (2000). Factors affecting the quality of building project in Honkong, International Journal of Quality & Reliability Management, 17, 423-441.

Chiladamkerng, K. (2007). Improvement of Construction Products in Management Factors. The 11th National Civil Conference, Huanhin, Thailand.

Chovichien, V. (2001). Factors Affecting the Construction Operations of Mass Transit Electrical Train Project in Bangkok Metropolis. The seventh national civil work meeting.

David, A. H., & Murat, G. (1999). Perception quality in building project. Journal of Management in Engineering, l15(2), 135-142.

Koeim, N & Leupasert, K. (2006). Factors of Construction Businesses in Lampang. The 10th National Civil Conference, Huanhin, Thailand.

Lorthiraphong, P & Leupasert. A. (2005). A Study on Necessity Skills for Construction Management. The 10th National Civil Conference, Huanhin, Thailand.

Ministry of Planning and Investment. (2021). The 9th Five-Year National Socio-Economic Development Plan (2021-2025). Lao PDR.

Oberlender, G. D. (1993). Project Management and Construction. McGraw- Hill, New York.

Sengthamthone, A. (1999). Construction Business Management in Meuang District, Nakhonesavan Province, Thailand. Xiengmai University.

Setthabout. A., & Subsomphon, V. (2006). Issues of Design and Construction Contracts for the Governmental Projects. The 10th National Civil Conference, Huanhin, Thailand.

Soulasakhone, S. (2006). Critical Factors of Construction Project's Quality. The 10th National Civil Conference, Huanhin, Thailand.

The National Assembly of Lao PDR. (2011). Construction Law. Ministry of Public Works and Transport, Lao PDR.

Thongthammasad, B. (2007). Construction Right in Laos, Thailand, and Vietnam. The 11th National Civil Conference, Huanhin, Thailand.